ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເລກທີ: 35 /ສພທ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ: 05 ຕຸລາ 2022

**ມະຕິ**
**ກອງປະຊຸມສະພາບໍລິຫານ ທຄຕລ ສະໄຫມສາມັນ**
**ວັນທີ 05/10/2022**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 3 ປະຈໍາປີ 2022 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00-16:30 ໂມງ ວັນທີ 05/10/2022 ທີ່ສໍານັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ຄໍາສຸກ ສູນດາລາ ຮັກສາການປະທານສະພາບໍລິຫານ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມຄົບ 7 ທ່ານ (ໃນນັ້ນ, ສະມາຊິກສະພາບໍລິຫານຈາກຜູ້ຖືຮຸ້ນຍຸດທະສາດ ແມ່ນຜູ້ຕາງໜ້າເຂົ້າຮ່ວມ) ແລະ ມີຄະນະອໍານວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1) ຮັບຮອງດ້ານຫຼັກການຕໍ່ກັບຮ່າງນະໂຍບາຍການກວດກາພາຍໃນ ທຄຕລ;
2) ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2022:
   - ມື້ປິດປຶ້ມ ເພື່ອກໍານົດສິດຜູ້ເຂົ້າຮ່ວມກອງປະຊຸມ: 20/10/2022
   - ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 22/11/2022
   - ສະຖານທີ່: ສໍານັກງານໃຫຍ່ ທຄຕລ
     - ສໍາລັບວາລະກອງປະຊຸມ ມອບໃຫ້ຜູ້ອໍານວຍການ ທຄຕລ ຄົ້ນຄວ້າກະກຽມ

**ຮັກສາການປະທານສະພາບໍລິຫານ**

ຄໍາສຸກ ສູນດາລາ